TOUNMANYSONE et al. (2021). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 7. Issue 2. July – December 2021. Page 56 - 65.

# ຜົນກະທົບຂອງໂຄງການປູກຜັກປອດສານພິດຕໍ່ການສ້າງລາຍໄດ້ພາກຄົວເຮືອນຂອງປະຊາຊົນ ຢູ່ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ

**ທອງສາ ຕຸ່ນມະນີສອນ*, ຄູນ ສັກບົວວົງ, ລິດສະດາ ບານມະນີວົງ, ວັນນະສິນ ມະນີວົງ, ເພັດວຽງສະຫວັນ ພູມພັກດີ**

*ພາກວິຊາການເງິນ-ການທະນາຄານ, ຄະນະບໍລິຫານທຸລະກິດ, ມະຫາວິທະຍາໄລສະຫວັນນະເຂດ, ສປປ ລາວ*

***ຕິດຕໍ່ພົວພັນ:** ທອງສາ ຕຸ່ນມະນີສອນ*
*ພາກວິຊາການເງິນ-ການທະນາຄານ*
*ຄະນະບໍລິຫານທຸລະກິດ,*
*ມະຫາວິທະຍາໄລສະຫວັນນະເຂດ*
*ເບີໂທ: +85620 2268 1010*
*ອີເມວ:*
*Thongsa1984@hotmail.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດຄວາມ: 04 ມິຖຸນາ 2021*
*ການປັບປຸງ: 15 ສິງຫາ 2021*
*ການຕອບຮັບ: 30 ສິງຫາ 2021*

## ບົດຄັດຫຍໍ້

ຈຸດປະສົງຂອງການສຶກສາໃນຄັ້ງນີ້ ແມ່ນປະເມີນຜົນກະທົບຂອງໂຄງການປູກຜັກປອດສານພິດ (Organic Vegetable Growing Project: OVGP) ຕໍ່ກັບການສ້າງລາຍໄດ້ ພາກຄົວເຮືອນຂອງປະຊາຊົນຢູ່ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ. ໂດຍໄດ້ນໍາໃຊ້ຂໍ້ມູນຕັດຂວາງ (cross sectional data), ຂໍ້ມູນແມ່ນເກັບກໍາມາຈາກການສຸມຕົວຢ່າງທັງໝົດ 313 ຄົວເຮືອນພາຍໃນ ນະຄອນໄກສອນພົມວິຫານ, ແຂວງ ສະຫວັນນະເຂດ ໃນປີ 2020, ການຄາດປະມານທີ່ໄດ້ນໍາໃຊ້ຕາມແບບຈໍາລອງການຖົດຖອຍກໍາລັງສອງນ້ອຍສຸດ (Ordinary Least Square: OLS) ຕາມຫຼັກເສດຖາມິຕິ ແລະ ການສຶກສາຄັ້ງນີ້ແມ່ນອີງໃສ່ An and Richard (2015). ເຊິ່ງຜົນຂອງການສຶກສານີ້ພົບວ່າ: ລາຍໄດ້ຈາກການປູກຜັກປອດສານພິດຂອງປະຊາຊົນແມ່ນມີຄ່າສະເລ່ຍສູງກວ່າສະເລ່ຍຈາກການເຮັດກະສິກໍາທົ່ວໄປປະມານ 2.11 ເທື່ອ, ໂຄງການປູກຜັກປອດສານພິດແມ່ນມີຜົນກະທົບໃນທາງທີ່ດີ ຫຼື ທາງບວກຕໍ່ກັບການສ້າງລາຍໄດ້ພາກຄົວເຮືອນຂອງປະຊາຊົນ ໂດຍຜົນກະທົບດັ່ງກ່າວແມ່ນມີຄວາມໝາຍທາງດ້ານສະຖິຕິ, ສໍາລັບປັດໄຈທີ່ມີຜົນກະທົບຂອງໂຄງການຜັກປອດສານພິດຕໍ່ກັບການສ້າງລາຍໄດ້ພາກຄົວເຮືອນ ຂອງປະຊາຊົນ ປະກອບມີ 5 ປັດໄຈຄື: ເພດ (Gender), ລະດັບການສຶກສາ (Educ), ເນື້ອທີ່ການຜະລິດ (Land), ການເປັນເຈົ້າຂອງເນື້ອທີ່ດິນການຜະລິດ (Owner) ແລະ ການເຂົ້າຮ່ວມໂຄງການປູກຜັກປອດສານພິດ (Parti). ສະນັ້ນ, ຜູ້ສ້າງນະໂຍບາຍຄວນຮັບຮູ້ວ່າການສົ່ງເສີມໂຄງການປູກຜັກປອດສານພິດ(OVGP) ແມ່ນສາມາດສ້າງລາຍໄດ້ໃຫ້ແກ່ພາກຄົວເຮືອນຂອງປະຊາຊົນ ແລະ ຈະມີຜົນກະທົບທີ່ສໍາຄັນຕໍ່ຍຸດທະສາດການຫຼຸດຜ່ອນຄວາມທຸກຍາກໃນ ສປປ ລາວ. ການສຶກສານີ້ແມ່ນກໍລະນີສຶກສາທໍາອິດໃນແຂວງສະຫວັນນະເຂດ, ສປປ ລາວ ທີ່ພະຍາຍາມສຶກສາຄົ້ນຄວ້າຫາຜົນກະທົບຂອງໂຄງການປູກຜັກປອດສານພິດ (OVGP) ຕໍ່ສ້າງລາຍໄດ້ໃຫ້ແກ່ພາກຄົວເຮືອນຂອງປະຊາຊົນໃນ ແຂວງສະຫວັນນະເຂດ, ສປປ ລາວ.

**ຄໍາສໍາຄັນ:** *ໂຄງການປູກຜັກປອດສານພິດ, ລາຍໄດ້ພາກຄົວເຮືອນ, ນະຄອນໄກສອນພົມວິຫານ*

TOUNMANYSONE et al. (2021). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 7. Issue 2. July – December 2021. Page 56 - 65.

# The Impact of Organic Vegetable growing Project to Household's Income generation of residents in Kaisone Phomvihan City, Savannakhet Province

**Thongsa TOUNMANYSONE*, Khoune SACKBOUAVONG, Lidsada BANMANIVONG, Vannasinh MANIVONG, Phetviengsavanh PHOUMPHAKDY**

*Department of Finance and Banking, Faculty of Business Administration, Savannakhet University, Lao PDR*

***Corresponding author:***
*Thongsa TOUNMANYSONE, Department of Finance and Banking, Faculty of Business Administration, Savannakhet University,*
*Tel: +85620 2268 1010,*
*E-mail: Thongsa1984@hotmail.com*

*Article Info:*
*Submitted: Jun 04, 2021*
*Revised: Aug 15, 2021*
*Accepted: Aug 30, 2021*

**Abstract**

The objective of this study was to estimate the impact of Organic Vegetable Growing Project (OVGP) on household's income generation of residents in Kaisone Phomvihan City, Savannakhet Province, We use cross-sectional data that is collected from a sample of 313 households in the Kaisone Phomvihanh City, Savannakhet Province in 2020, the estimate is used regression model (Ordinary Least Square: OLS) and the econometric analysis is based on the model constructed by An and Richard (2015). The results of the study founds the average income from organic vegetable growing is higher than average income from other agriculture activities about 2.11 times, the OVGP has a positive impact on household's income generation and the impact is statistically significant, The significant factors as an impact the household's income generation ranging from gender, education, land for agriculture, ownership of land and participation, because they have statistically positive impact on household's income generation. Therefore, Policy maker should be aware the promotion of OVGP that have significant impacts on poverty reduction strategy of Lao PDR. It is the first paper try to investigate the impact of the OVGP on household's income in Savannakhet province, Lao PDR.

**Keywords:** *Organic Vegetable Project, Household's Income, Kaisone Phomvihan City*

## 1. ພາກສະເໜີ

ສປປ ລາວ ໄດ້ຖືການກະສິກຳແມ່ນຂະແໜງໜຶ່ງທີ່ມີຄວາມສຳຄັນປະກອບສ່ວນເຂົ້າໃນໂຄງປະກອບທາງ ດ້ານເສດຖະກິດແຫ່ງຊາດ ເຊິ່ງສະແດງໃຫ້ເຫັນວ່າໃນປີ 2019 ຂະແໜງກະສິກຳ (ປູກຝັງ, ລ້ຽງສັດ, ປ່າໄມ້, ປະມົງ) ໄດ້ກວມເອົາ 24.87% ຂອງ ລວມຍອດຜະລິດຕະພັນພາຍໃນ (GDP), ໃນນັ້ນພາກສ່ວນທີ່ສຳຄັນທີ່ສຸດກໍ່ຍັງແມ່ນພາກສ່ວນປູກຝັງທີ່ເປັນພາກສ່ວນທີ່ສຳຄັນທີ່ສຸດເຊິ່ງກວມເອົາ 16.57% ຂອງຂະແໜງກະສິກຳ. ໃນພາກສ່ວນປູກຝັງນັ້ນແມ່ນການປູກພືດຜັກ ເປັນພາກສ່ວນທີ່ສຳຄັນ ເຊິ່ງເມື່ອເບິ່ງທາງດ້ານເນື້ອທີ່ແມ່ນຢູ່ໃນອັນດັບ 2 ຮອງຈາກເນື້ອທີ່ຂອງການປູກເຂົ້າເຊິ່ງມີເນື້ອທີ່ 180,957 ເຮັກຕາ (Ministry of Agriculture and Forestry: MAF, 2019).

ແຂວງສະຫວັນນະເຂດ ເປັນແຂວງໜຶ່ງທີ່ມີການປູກພືດຜັກຫຼາຍພໍສົມຄວນເຊິ່ງເປັນຮອງອັນດັບ 3 ຮອງຈາກແຂວງ ຈຳປະສັກ ແລະ ແຂວງ ວຽງຈັນ ເຊິ່ງມີເນື້ອການປູກທົ່ວແຂວງແມ່ນ 17,277 ເຮັກຕາ ແຕ່ເມື່ອເບິ່ງດ້ານຜົນຜະລິດທີ່ໄດ້ຮັບ ກໍ່ຍັງຢູ່ໃນລະດັບດີພໍສົມຄວນຄືຢູ່ໃນລຳດັບທີ່ 4 ຮອງຈາກແຂວງຈຳປະສັກ, ແຂວງວຽງຈັນ ແລະ ນະຄອນຫຼວງວຽງຈັນ ເຊິ່ງມີຜົນຜະລິດຢູ່ທີ່ 102,954 ໂຕນ

(MAF,2019). ເຊິ່ງຖືໄດ້ວ່າເປັນແຂວງໜຶ່ງທີ່ໄດ້ນຳເອົາແນວທາງນະໂຍບາຍຂອງລັດຖະບານມາຜັນຂະຫຍາຍຊອກທຸກວິທີທາງ ເພື່ອຊຸກຍູ້ໃຫ້ປະຊາຊົນໃນແຕ່ລະທ້ອງຖິ່ນປູກພືດ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ. ຕໍ່ກັບບັນຫາດັ່ງກ່າວການນຳຂອງແຂວງ ຈິ່ງໄດ້ສົ່ງເສີມປະຊາຊົນໃຫ້ມີການປູກພືດກະສິກຳເພີ່ມໃຫ້ເປັນສິນຄ້າ ໃນນັ້ນລວມເຖິງການປູກຜັກປອດສານພິດອີກດ້ວຍ. ສຳລັບການປູກພືດຕ່າງໆຢູ່ ແຂວງ ສະຫວັນນະເຂດ ເຫັນວ່າມີການຂະຫຍາຍຕົວດີສົມຄວນ ສາມາດຕອບສະໜອງ ໃຫ້ແກ່ການບໍລິໂພກພາຍໃນໄດ້ໂດຍພື້ນຖານ. ໃນປີ 2019 ສາມາດປູກພືດຜັກໄດ້ເຖິງ 17,277 ເຮັກຕາ ມີສະມັດຕະພາບຂອງການຜະລິດແມ່ນ 5.96 ໂຕນຕໍ່ເຮັກຕາ, ມີຜົນຜະລິດ 102,964 ໂຕນ ສົມທຽບໃສ່ປີ 2018 ເພີ່ມຂຶ້ນ 13,11% (MAF, 2019).

ສຳລັບການປູກຜັກປອດສານພິດກໍ່ເປັນພາກສ່ວນໜຶ່ງທີ່ສຳຄັນຂອງການປູກຝັງ ທີ່ໄດ້ຮັບຄວາມສົນໃຈຢູ່ໃນຫຼາຍປະເທດນັບທັງປະເທດພັດທະນາແລ້ວ ແລະກຳລັງພັດທະນາ ເຊິ່ງໄດ້ກໍ່ໃຫ້ເກີດມີຫຼາຍໂຄງການສະໜັບສະໜູນການປູກຜັກປອດສານພິດດັ່ງກ່າວ. ໂຄງການປູກຜັກປອດສານພິດ ເປັນໂຄງການໜຶ່ງທີ່ມີມາດົນນານພໍສົມຄວນ ເຊິ່ງເປັນໂຄງການທີ່ດີທີ່ແນໃສ່ຍົກສູງຄຸນນະພາບຊີວິດຂອງປະຊາຊົນທັງຜູ້ເຮັດ ແລະ ຜູ້ບໍລິໂພກ ເຖິງຢ່າງໃດກໍ່ຕາມຍັງເປັນຫົວຂໍ້ໜຶ່ງທີ່ສົນທະນາຖົກຖຽງກັນຫຼາຍພໍສົມຄວນໃນການພັດທະນາເສດຖະກິດຊຸມຊົນ ມີການສຶກສາໃນປະເທດກຳລັງພັດທະນາ ໄດ້ວິເຄາະກ່ຽວກັບຜົນກະທົບ ການເຂົ້າຮ່ວມກັບລາຍໄດ້ ຂອງຄົວເຮືອນ ຂອງໂຄງການປູກພືດຜັກ (Mulatu, Legesse and Ketema, 2017) ເຫັນວ່າສາມາດປັບປຸງລາຍໄດ້ຂອງຄົວເຮືອນ. ໃນແຜນການພັດທະນາເສດເສດຖະກິດ-ສັງຄົມ 5 ປີ ແຕ່ປີ 2021-2025 ຂອງລາວເຮົາຢູ່ໃນເປົ້າໝາຍທາງດ້ານເສດຖະກິດ ທີ່ເວົ້າເຖິງຄວາມຫຼາກຫຼາຍ ຂອງເສດຖະກິດການຜະລິດທີ່ສຳຄັນກໍ່ຍັງແມ່ນກະສິກຳ ແລະ ອາຫານສະອາດ (Outhavong, 2020).

ສຳລັບ ນະຄອນໄກສອນພົມວິຫານ ກໍ່ໄດ້ຖືການປູກຜັກປອດສານພິດເປັນບູລິມະສິດສຳຄັນ ທີ່ມີການສົ່ງເສີມໃຫ້ປະຊາຊົນມີ ການພັດທະນາເສດຖະກິດຄອບຄົວ ເພື່ອສ້າງລາຍໄດ້ເຮັດໃຫ້ຫຼຸດຄວາມທຸກຍາກເທື່ອລະກ້າວ ທັງເປັນການຮັບປະກັນທາງດ້ານສະບຽງອາຫານ ເຊິ່ງກົງກັບທິດທາງ ຂອງລັດຖະບານທີ່ໄດ້ມີນະໂຍບາຍ ເປີດກວ້າງ ແລະ ສົ່ງເສີມໂຄງການປູກຜັກປອດສານພິດ ເພື່ອເປັນການສົ່ງເສີມໃຫ້ມີວຽກເຮັດງານທຳ ແລະ ສ້າງລາຍໄດ້ໃຫ້ກັບປະຊາຊົນ. ແຕ່ວ່າສຳລັບການປະເມີນຜົນກະທົບໃນໄລຍະຜ່ານມາແມ່ນຍັງບໍ່ທັນມີ. ສະນັ້ນ, ການສຶກສາໃນຄັ້ງນີ້ ຈິ່ງຍົກເອົາປະເດັນດັ່ງກ່າວມາສຶກສາ. ໂດຍມີຈຸດປະສົງສຳລັບການສຶກສາ ກໍ່ແມ່ນເພື່ອປະເມີນຜົນກະທົບຂອງໂຄງການປູກຜັກປອດສານພິດ ຕໍ່ກັບການສ້າງລາຍໄດ້ຂອງປະຊາຊົນ ຢູ່ນະຄອນໄກສອນພົມວິຫານ, ແຂວງ ສະຫວັນນະເຂດ.

## 2. ອຸປະກອນ ແລະ ວິທີການ

### 2.1 ຮູບແບບການສຶກສາ

ການສຶກສາໃນຄັ້ງນີ້ ແມ່ນແບບປະລິມານໂດຍແມ່ນນຳໃຊ້ແບບຈຳລອງທາງເສດຖາມິຕິເຂົ້າຊ່ວຍ ເພື່ອຊອກຫາປັດໃຈ ຫຼື ຕົວປ່ຽນທີ່ມີຜົນກະທົບຕໍ່ກັບການສ້າງລາຍໄດ້ພາກຄົວເຮືອນຂອງປະຊາຊົນພາຍໃນ ນະຄອນໄກສອນພົມວິຫານ, ແຂວງ ສະຫວັນນະເຂດ.

### 2.2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ນຳໃຊ້ເຂົ້າໃນການສຶກສາຄັ້ງນີ້ ທັງໝົດແມ່ນ 313 ຄົວເຮືອນ ໂດຍນຳໃຊ້ການກຳນົດຕົວຢ່າງແບບວິທີຂອງທາໂຣ ຢາມາເນ (Yamane, 1973). ເຊິ່ງປະກອບມີ 2 ພາກສ່ວນຄື: ສຳພາດຄອບຄົວທີ່ໄດ້ເຂົ້າຮ່ວມໂຄງການມີຈຳນວນ 19 ຄົວເຮືອນ ແລະ ຄົວເຮືອນທີ່ບໍ່ໄດ້ເຂົ້າຮ່ວມໂຄງການປູກຜັກປອດສານພິດ 294 ຄົວເຮືອນ.

### 2.3 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ການສຶກສາຄັ້ງນີ້ ແມ່ນໄດ້ນຳໃຊ້ແບບສອບຖາມເພື່ອເປັນເຄື່ອງມືຕົ້ນຕໍເຂົ້າໃນການເກັບກຳຂໍ້ມູນ. ສຳລັບການອອກແບບ ແບບສອບຖາມແມ່ນໄດ້ອີງໃສ່ບາງການສຶກສາ(Phommalailoun,2017;Rodriguez, Rejesus, and Aragon, 2007; Vanvu, Ho and Hoi Le, 2020

) ເຊິ່ງກ່ອນຈະມີການເກັບກຳຢ່າງເປັນທາງການນັ້ນ ກໍ່ຈະມີການທົດສອບ-ທົດລອງກ່ອນ ໃນຈຳນວນ 10 ສະບັບ, ແລ້ວໄດ້ມີການປັບປຸງໃຫ້ເໝາະສົມກັບຄວາມເປັນຈິງ ເຊິ່ງແບບສອບຖາມປະກອບມີ 3 ພາກສ່ວນຄື: 1). ຂໍ້ມູນທົ່ວໄປ, 2). ຂໍ້ມູນການຜະລິດ ແລະ ເສດຖະກິດຂອງຄົວເຮືອນ ແລະ 3). ຂໍ້ມູນຄວາມຄິດເຫັນອື່ນໆ.

### 2.4 ການເກັບກຳຂໍ້ມູນ

ການເກັບກຳຂໍ້ມູນ ແມ່ນໄດ້ນຳໃຊ້ຂໍ້ມູນປະຖົມພູມ (Primary data) ເຊິ່ງໄດ້ຈາກການເກັບກຳລວບລວມຂໍ້ມູນຈາກການສຳພາດປະຊາຊົນໂດຍກົງ (ແບບເຊິ່ງໜ້າ) ຕາມຄົວເຮືອນ ໃນບ້ານທີ່ມີໂຄງການປູກຜັກປອດສານພິດ ພາຍໃນເຂດ ນະຄອນໄກສອນພົມວິຫານ ຫຼື ເຂດບ້ານເປົ້າໝາຍ ເຊິ່ງໃນການສຳພາດແຕ່ລະຄັ້ງແມ່ນຈະໃຊ້ເວລາປະມານ 15-20 ນາທີ. ສຳລັບການດຳເນີນການເກັບກຳຂໍ້ມູນດັ່ງກ່າວແມ່ນໄດ້ຈັດຂຶ້ນໃນຄັ້ງວັນທີ 25/6-2/7/2020, ການເກັບກຳຂໍ້ມູນໃນຄັ້ງນີ້ ແມ່ນໄດ້ຮັບການຊ່ວຍເຫຼືອຈາກຄູອາຈານ ແລະ ນັກສຶກສາ ຂອງຄະນະບໍລິຫານທຸລະກິດ, ມະຫາວິທະຍາໄລ ສະຫວັນນະເຂດ ໂດຍໄດ້ມີການຈັດໃຫ້ມີການແນະນຳກ່ຽວກັບເຄື່ອງມືຢ່າງລະອຽດກ່ອນຈະລົງເກັບກຳຂໍ້ມູນ.

### 2.5 ການວິເຄາະຂໍ້ມູນ

ສຳລັບການວິເຄາະຂໍ້ມູນ ແມ່ນໄດ້ນຳໃຊ້ໂປແກຣມ STATA 13 ໂດຍແມ່ນນຳໃຊ້ວິທີການທາງເສດຖາມິຕິ (Econometric) ນັ້ນກໍ່ຄືໃຊ້ສົມຜົນຖົດຖອຍພະຫຸຄູນ (Multiple Regression Model) ເຂົ້າໃນການປະຍຸກໃຊ້ຕາມແບບຈຳລອງການສຶກສາຂອງ An and Richard (2015) ເຊິ່ງສາມາດຂຽນແບບຈຳລອງ ຫຼື ສົມຜົນຖົດຖອຍພະຫຸຄູນ ດ້ວຍວິທີກຳລັງສອງນ້ອຍສຸດ (Ordinary Least Square: OLS) ດັ່ງນີ້:

$\mathrm{Ln(Y)} = \beta_0 + \beta_i X_{ij} + \varepsilon_t$;/Ln(Y): ລໍອກກາລິດລາຍໄດ້(ຕົວປ່ຽນຕາມ), $\beta_0$ : ຄ່າຄົງທີ່, $\beta_i$ :ສໍາປະສິດຂອງຕົວປ່ຽນອິດສະຫຼະ, $X_{ij}$ :ຕົວປ່ຽນອິດສະຫຼະ ແລະ $\varepsilon_t$ :ຄ່າຄາດເຄື່ອນ. ເຊິ່ງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະ ທີ່ນຳໃຊ້ເຂົ້າໃນແບບຈຳລອງນີ້ ລາຍລະອຽດແມ່ນສະແດງອອກດັ່ງຕາຕະລາງທີ 2.1

## 3. ຜົນໄດ້ຮັບ

### 3.1 ຂໍ້ມູນທົ່ວໄປ

ຈາກການສຶກສາເຫັນວ່າ ດ້ານເພດຂອງກຸ່ມຕົວຢ່າງສ່ວນຫຼາຍແມ່ນເພດຍິງ ເຊິ່ງກວມເອົາປະມານ 68%, ອາຍຸໂດຍສະເລ່ຍແມ່ນປະມານ 52 ປີ, ລະດັບການສຶກສາໂດຍສະເລ່ຍແມ່ນປະມານ 7 ປີ, ສະຖານະພາບແມ່ນແຕ່ງງານເປັນສ່ວນໃຫຍ່ກວມເອົາປະມານ 89.14%,ສະມາຊິກພາຍໃນຄົວເຮືອນແມ່ນປະມານ 6 ຄົນ, ມີເນື້ອທີ່ການເຮັດກະສິກຳໂດຍສະເລ່ຍປະມານ 4 ເຮັກຕາ, ມີປະສົບການປະມານ 34 ປີ, ມີແຮງງານໃນຄົວເຮືອນໂດຍສະເລ່ຍປະມານ 4 ຄົນ , ສ່ວນໃຫຍ່ແມ່ນມີເນື້ອທີ່ເປັນຂອງຕົນເອງກວມເອົາປະມານ 92%, ຈຳນວນຄົວເຮືອນທີ່ເຂົ້າຮ່ວມໂຄງການປູກຜັກປອດສານພິດແມ່ນຍັງໜ້ອຍຢູ່ເຊິ່ງກວມພຽງແຕ່ 6% ແລະລາຍໄດ້ໂດຍສະເລ່ຍຂອງຄົວເຮືອນຕໍ່ປີປະມານ 20,200,000 ກີບ, ລາຍລະອຽດສະແດງອອກດັ່ງຕາຕະລາງທີ 3.1

### 3.2 ສະພາບການປູກຜັກປອດສານພິດພາກຄົວເຮືອນຂອງປະຊາຊົນ

ຈາກການສຶກສາເຫັນວ່າ ການປູກຜັກປອດສານພິດແມ່ນບໍ່ໄດ້ຮັບຊົນລະປະທານ ຫຼື ບໍ່ໄດ້ນອນຢູ່ໃນເຂດຊົນລະປະທານໄປເຖິງແຕ່ຢ່າງໃດ ໂດຍປະຊາຊົນໄດ້ນຳໃຊ້ການເຈາະນ້ຳສ້າງບາດານແທນ, ໂດຍເນື້ອທີ່ການຜະລິດ ຂອງການປູກຜັກປອດສານພິດແມ່ນສາມາດເຮັດໃຫ້ໄດ້ທັງ 2 ລະດູ (ລະດູແລ້ງ+ລະດູຝົນ), ເນື້ອທີ່ການປູກຜັກປອດສານພິດຂອງປະຊາຊົນ ແມ່ນມີເນື້ອທີ່ໂດຍສະເລ່ຍຕ່ຳກວ່າເນື້ອທີ່ການເຮັດກະສິກຳ (ການປູກຝັງ) ປະເພດອື່ນໆ ແຕ່ວ່າຜົນໄດ້ຮັບໂດຍສະເລ່ຍ ແມ່ນສູງກວ່າການປູກປະເພດອື່ນໆປະມານ 2.11 ເທື່ອ, ລາຍລະອຽດສະແດງອອກດັ່ງຕາຕະລາງທີ 3.2

### 3.3 ຜົນກະທົບຂອງໂຄງການຜັກປອດສານພິດຕໍ່ກັບລາຍໄດ້ພາກຄົວເຮືອນຂອງປະຊາຊົນ

ສຳລັບການຄາດປະມານ (Estimation) ໃນແບບຈຳລອງ (Model) ທີ່ໄດ້ນຳໃຊ້ຂໍ້ມູນຕັດຂວາງ (Cross section data) ເຂົ້າໃນການສຶກສາສ່ວນໃຫຍ່ ມັກຈະມີບັນຫາທາງເສດຖາມິຕິເກີດຂຶ້ນເປັນຕົ້ນແມ່ນບັນຫາພະຫຸສຳພັນ (Multicollinearlity) ແລະ ບັນຫາສະຫະສຳພັນ (Hetteroskedasticity), ເຊິ່ງບັນຫາເຫຼົ່ານີ້ສາມາດກວດສອບ ແລະ ແກ້ໄຂໄດ້ໃນເວລາການຄາດປະມານ.

ການກວດສອບຄວາມສຳພັນຂອງບັນດາຕົວປ່ຽນອິດສະຫຼະດ້ວຍກັນ ຫຼື ການກວດສອບບັນຫາພະຫຸສຳພັນຂອງບັນດາຕົວປ່ຽນອິດສະຫຼະ (Multicollinearlity) ຖ້າຫາກຕົວປ່ຽນອິດສະຫຼະຫາກມີການພົວພັນກັນສູງກວ່າ 0.6 (ຂໍ້ມູນຕັດຂວາງ) ສະແດງວ່າເກີດມີບັນຫາພະຫຸສຳພັນ (Multicollinearlity) (Sisouphanthong et al. 2012) ເຊິ່ງຈາກການທົດສອບໃນແບບຈຳລອງນີ້ດ້ວຍວິທີ Correlation Matrix ເຫັນວ່າຄ່າສູງສຸດແມ່ນ 0.51 ເຊິ່ງເປັນການພົວພັນຂອງຕົວປ່ຽນລະດັບການສຶກສາແຕ່ວ່າຕໍ່າກວ່າ 0.6 ສະແດງວ່າ ບໍ່ມີບັນຫາດັ່ງກ່າວໃນແບບຈຳລອງນີ້.

ການກວດສອບບັນຫາຄ່າຜັນປ່ຽນ ຂອງຄ່າຄາດເຄື່ອນບໍ່ຄົງທີ່ (Hetteroskedasticity) ໃນແບບຈຳລອງນີ້ແມ່ນເຫັນວ່າມີບັນຫາດັ່ງກ່າວ. ດັ່ງນັ້ນ, ເພື່ອເຮັດໃຫ້ຄ່າຜັນປ່ຽນຂອງຄ່າຄາດເຄື່ອນຄົງທີ່ ຢູ່ໃນລະດັບທີ່ແນ່ນອນ. ສະນັ້ນ, ຈຶ່ງຕ້ອງໄດ້ນຳໃຊ້ວິທີການແກ້ໄຂບັນຫາດັ່ງກ່າວ ດ້ວຍວິທີ Robust Standard Error ເຂົ້າຊ່ວຍ ເຊິ່ງການຄາດປະມານຕາມແບບຈຳລອງ ຈາກກຸ່ມຕົວຢ່າງ ເຫັນວ່າ n = 313, F(9, 303) = 6.53 ແລະ Prob > F = 0.000 ສະແດງວ່າສົມຜົນທີ່ໄດ້ຈາກການຄາດປະມານນີ້ໃຊ້ໄດ້ ດ້ວຍລະດັບຄວາມສຳຄັນທາງສະຖິຕິເທົ່າກັບ 0.001.

ຄ່າ R-squared = 0.1691 ໝາຍຄວາມວ່າ ຕົວປ່ຽນອິດສະຫຼະທັງໝົດໃນສົມຜົນ ຫຼື ແບບຈຳລອງນີ້ຂອງການສຶກສາໃນຄັ້ງນີ້ ແມ່ນມີຄວາມສາມາດໃນການອະທິບາຍຕົວປ່ຽນຕາມໄດ້ປະມານ 16.91% (OLS), ລາຍລະອຽດສະແດງອອກ ດັ່ງຕາຕະລາງທີ 3.3

## 4. ວິພາກຜົນ

ຈາກການຄາດປະມານດ້ວຍແບບຈຳລອງ OLS ເຊິ່ງຜົນຂອງການສຶກສາເຫັນວ່າ ມີ 5 ປັດໄຈຄື: ເພດ, ລະດັບການສຶກສາ, ເນື້ອທີ່ດິນ, ການເປັນເຈົ້າຂອງເນື້ອທີ່ການຜະລິດ ແລະ ການເຂົ້າຮ່ວມໂຄງການປູກຜັກປອດສານພິດ ແມ່ນມີຜົນຕໍ່ກັບການສ້າງລາຍໄດ້ ພາກຄົວເຮືອນຂອງປະຊາຊົນ. ສ່ວນວ່າປັດໄຈອື່ນໆ ເຊັ່ນ: ສະຖານະພາບ, ຂະໜາດຄົວເຮືອນ, ປະສົບການ ແລະ ຈຳນວນແຮງງານໃນຄົວເຮືອນ ແມ່ນບໍ່ມີຜົນຕໍ່ກັບການສ້າງລາຍໄດ້ພາກຄົວເຮືອນຂອງປະຊາຊົນ. ເຊິ່ງລາຍລະອຽດໄດ້ມີການວິພາກດັ່ງລຸ່ມນີ້:

ເພດ (Gender) ແມ່ນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ຄື ມີການພົວພັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິດ້ວຍລະດັບຄວາມສຳຄັນ 0.01, ໝາຍຄວາມວ່າ ເພດແມ່ນມີຜົນຕໍ່ກັບການສ້າງລາຍໄດ້ຂອງຄົວເຮືອນ ຖ້າກຳນົດໃຫ້ປັດໄຈອື່ນໆຄົງທີ່ ສາມາດອະທິບາຍວ່າ ຖ້າຫາກຄົວເຮືອນໃດຫາກມີຫົວໜ້າຄົວເຮືອນເປັນເພດຊາຍ ຈະມີລາຍໄດ້ຫຼາຍກວ່າຜູ້ທີ່ມີຫົວໜ້າຄົວເຮືອນເປັນເພດຍິງປະມານ 41.39%. ເຊິ່ງຜົນຂອງການສຶກສານີ້ແມ່ນສອດຄ່ອງກັບຜົນການສຶກສາຂອງ (Phommalailoun, 2017) ແຕ່ກົງກັນຂ້າມກັບຜົນການສຶກສາຂອງ (Vanvu et al., 2020 & Mulatu, 2017).

ລະດັບການສຶກສາ (Educ) ແມ່ນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ຄື ມີການພົວພັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິດ້ວຍລະດັບຄວາມສຳຄັນ 0.05, ໝາຍຄວາມວ່າລະດັບການສຶກສາ ແມ່ນມີຜົນຕໍ່ກັບການສ້າງລາຍໄດ້ຂອງຄົວເຮືອນ ຖ້າກຳນົດໃຫ້ປັດໄຈອື່ນຄົງທີ່ສາມາດອະທິບາຍວ່າ ຖ້າຫາກປະຊາຊົນມີຫົວໜ້າຄົວເຮືອນທີ່ມີລະດັບການສຶກສາເພີ່ມຂຶ້ນ 1 ປີ ຈະເຮັດໃຫ້ມີລາຍໄດ້ເພີ່ມຂຶ້ນປະມານ 2.86%. ເຊິ່ງຜົນຂອງການສຶກສານີ້ແມ່ນສອດຄ່ອງກັບຜົນການສຶກສາຂອງ (Phommalailoun, 2017 & Vanvu et al., 2020) ແຕ່ກົງກັນຂ້າມກັບຜົນການສຶກສາຂອງ

(Girma & Gardebroek, 2015 & Bodriguez et al., 2007).

ເນື້ອທີ່ການຜະລິດ (Land) ແມ່ນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ຄືມີການພົວພັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິດ້ວຍລະດັບຄວາມສຳຄັນ0.05, ໝາຍຄວາມວ່າ ເນື້ອທີ່ການຜະລິດແມ່ນມີຜົນຕໍ່ກັບການສ້າງລາຍໄດ້ຂອງຄົວເຮືອນ ຖ້າກຳນົດໃຫ້ປັດໄຈອື່ນຄົງທີ່ສາມາດອະທິບາຍວ່າ ຖ້າຫາກຄົວເຮືອນໃດຫາກມີເນື້ອທີ່ການຜະລິດ ເພີ່ມຂຶ້ນ 1 ເຮັກຕາ ຈະເຮັດໃຫ້ມີລາຍໄດ້ເພີ່ມຂຶ້ນປະມານ 2.43%. ເຊິ່ງຜົນຂອງການສຶກສານີ້ແມ່ນສອດຄ່ອງກັບຜົນການສຶກສາຂອງ (Phommalailoun, 2017 & Olounlad et al., 2020) ແຕ່ກົງກັນຂ້າມກັບຜົນການສຶກສາຂອງ (Girma & Gardebroek, 2015).

ການເປັນເຈົ້າຂອງເນື້ອທີ່ການຜະລິດ (Owner) ແມ່ນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ຄືມີການພົວພັນໃນທິດທາງດຽວກັນກັບລາຍໄດ້ ຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິ ດ້ວຍລະດັບຄວາມສຳຄັນ 0.05, ໝາຍຄວາມວ່າ ການເປັນເຈົ້າຂອງເນື້ອທີ່ການຜະລິດແມ່ນມີຜົນຕໍ່ກັບການສ້າງລາຍໄດ້ ຂອງຄົວເຮືອນ ຖ້າກຳນົດໃຫ້ປັດໄຈອື່ນຄົງທີ່ສາມາດອະທິບາຍວ່າ ຖ້າຫາກຄົວເຮືອນໃດຫາກເປັນເຈົ້າຂອງເນື້ອທີ່ການຜະລິດເອງ ຈະມີລາຍໄດ້ຫຼາຍກວ່າຄົວເຮືອນທີ່ເຊົ່າເນື້ອທີ່ ເພື່ອເຮັດການຜະລິດປະມານ 45.93%. ເຊິ່ງຜົນຂອງການສຶກສານີ້ ແມ່ນສອດຄ່ອງກັບຜົນການສຶກສາຂອງ (Vanvu et al. 2020) ແຕ່ມີຄວາມກົງກັນຂ້າມກັບຜົນການສຶກສາຂອງ (Phommalailoun, 2017).

ການເຂົ້າຮ່ວມໂຄງການ ປູກຜັກປອດສານພິດ (Parti) ແມ່ນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ຄືມີການພົວພັນໃນທິດທາງດຽວກັນກັບລາຍໄດ້ ຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິດ້ວຍລະດັບຄວາມສຳຄັນ 0.001, ໝາຍຄວາມວ່າ ການເຂົ້າຮ່ວມໂຄງການປູກຜັກປອດສານພິດ ແມ່ນມີຜົນຕໍ່ກັບການສ້າງລາຍໄດ້ຂອງຄົວເຮືອນ ຖ້າກຳນົດໃຫ້ປັດໄຈອື່ນຄົງທີ່ສາມາດອະທິບາຍວ່າ ຖ້າຫາກຄົວເຮືອນໃດເຂົ້າຮ່ວມໂຄງການປູກຜັກປອດສານພິດ ຈະມີລາຍໄດ້ຫຼາຍກວ່າຄົວເຮືອນທີ່ບໍ່ໄດ້ເຂົ້າຮ່ວມໂຄງການປູກຜັກປອດສານພິດ ປະມານ 92.41%. ເຊິ່ງຜົນຂອງການສຶກສານີ້ ແມ່ນສອດຄ່ອງກັບຜົນການສຶກສາຂອງ (Vanvu et al., 2020; Girma & Gardebroek, 2015 & Olounlad et al., 2020) ແຕ່ຜົນການສຶກສານີ້ແມ່ນກົງກັນຂ້າມກັບຜົນການສຶກສາຂອງ (Phommalailoun, T. 2017).

ສ່ວນວ່າປັດໄຈດ້ານ ສະຖານະພາບ, ຂະໜາດຄົວເຮືອນ, ປະສົບການ ແລະ ຈຳນວນແຮງງານໃນຄອບຄົວແມ່ນ ລ້ວນແຕ່ມີການພົວພັນກັບການສ້າງລາຍໄດ້ຂອງຄົວເຮືອນໃນທິດທາງດຽວກັນ ແຕ່ວ່າທຸກຕົວປ່ຽນ ທີ່ກ່າວມາຂ້າງເທິງນີ້ ແມ່ນບໍ່ມີຄວາມສຳຄັນທາງສະຖິຕິ (Insignifecance) ຫຼື ບໍ່ມີຜົນຕໍ່ກັບການສ້າງລາຍໄດ້.

## 5. ສະຫຼຸບ

ໃນການສຶກສາກ່ຽວກັບຜົນກະທົບ ຂອງໂຄງການປູກຜັກປອດສານພິດຕໍ່ການສ້າງລາຍໄດ້ ຂອງປະຊາຊົນຢູ່ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ ເຊິ່ງມີຈຸດປະສົງສຶກສາ ສະພາບການປູກຜັກປອດສານ ພິດຂອງປະຊາຊົນ ຢູ່ນະຄອນໄກສອນພົມວິຫານ ແລະ ສຶກສາຜົນກະທົບຂອງໂຄງການປູກຜັກປອດສານພິດ ຕໍ່ກັບການສ້າງລາຍໄດ້ຂອງປະຊາຊົນ ຢູ່ນະຄອນໄກສອນພົມວິຫານ. ເຊິ່ງນຳໃຊ້ຂໍ້ມູນຕັດຂວາງ ໂດຍສອບຖາມຫົວໜ້າຄົວເຮືອນ. ຢູ່ນະຄອນໄກສອນພົມວິຫານ, ໂດຍໄດ້ນຳໃຊ້ວິທີສະຖິຕິພັນລະນາ ແລະ ໃຊ້ແບບຈຳລອງ OLS.

ສຳລັບສະພາບການປູກຜັກປອດສານພິດ ຂອງປະຊາຊົນ ດ້ານການເຂົ້າຮ່ວມໂຄງການ ປູກຜັກປອດສານຂອງປະຊາຊົນ ຍັງມີຈຳນວນໜ້ອຍ, ເນື້ອປູກຜັກປອດສານພິດສະເລ່ຍຕ່ຳກວ່າ ½ ເຮັກຕາ, ຈຳນວນຄອບຄົວທີ່ເຮັດການປູກຜັກປອດສານພິດ ແມ່ນບໍ່ໄດ້ຮັບຊົນລະປະທານແຕ່ນຳໃຊ້ນ້ຳບາດານແທນ, ສຳລັບເນື້ອທີ່ດິນປູກຜັກປອດສານພິດແມ່ນນຳໃຊ້ທັງສອງລະດູທັງໝົດ. ຜົນໄດ້ຮັບຈາກການປູກຜັກປອດສານພິດມີສະເລ່ຍສູງກວ່າ ຜົນໄດ້ຮັບສະເລ່ຍຈາກຜົນຜະລິດກະສິກຳປະເພດອື່ນໆ ປະມານ 2.11 ເທື່ອ.

ສໍາລັບປັດໄຈທີ່ມີຜົນກະທົບ ຂອງໂຄງການຜັກປອດສານພິດຕໍ່ກັບການສ້າງລາຍໄດ້ ພາກຄົວເຮືອນຂອງປະຊາຊົນຢູ່ພາຍໃນ ນະຄອນໄກສອນພົມວິຫານ ທັງໝົດປະກອບມີ 5 ປັດໄຈຄື: ເພດ (Gender), ລະດັບການສຶກສາ (Educ), ເນື້ອທີ່ການຜະລິດ(Land), ການເປັນເຈົ້າຂອງເນື້ອທີ່ດິນການຜະລິດ (Owner) ແລະ ການເຂົ້າຮ່ວມໂຄງການປູກຜັກປອດສານພິດ (Parti).

ສ່ວນວ່າ ປັດໄຈທີ່ບໍ່ມີຜົນຕໍ່ກັບການສ້າງລາຍໄດ້ຂອງປະຊາຊົນຢູ່ນະຄອນໄກສອນພົມວິຫານ ປະກອບມີ: ສະຖານະພາບ, ຂະໜາດຄົວເຮືອນ, ປະສົບການ ແລະ ຈໍານວນແຮງງານໃນຄອບຄົວ ແມ່ນລ້ວນແຕ່ມີການພົວພັນກັບການສ້າງລາຍໄດ້ ຂອງຄົວເຮືອນໃນທິດທາງດຽວກັນ ແຕ່ວ່າທຸກຕົວປ່ຽນທີ່ກ່າວມາຂ້າງເທິງນີ້ ແມ່ນບໍ່ມີຄວາມສໍາຄັນທາງສະຖິຕິ (ບໍ່ຜ່ານການທົດສອບທາງສະຖິຕິ ຫຼື Insignifecance) ຫຼື ບໍ່ມີຜົນຕໍ່ກັບການສ້າງລາຍໄດ້ ຫຼື ເນື່ອງຈາກບັນດາຕົວປ່ຽນດັ່ງກ່າວນັ້ນ ບໍ່ຜ່ານການທົດສອບທາງສະຖິຕິ ໃນລະດັບທີ່ຍອມຮັບໄດ້ນັ້ນເອງ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດ ກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າ ມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ

An, S & Richard, J. C. (2015). Impact of Contract Farming with Farmer Organizations on Farmers' Income: A Case Study of Reasmey Stung Sen Agricultural Development Cooperative in Cambodia. School of Agricultural and Wine Sciences, Charles Sturt University.

Girma, J. & Gardebroek, C. (2015). The impact of contracts on organic honey producers' incomes in southwestern Ethiopia. Journal of Forest Policy and Economics 50 (2015) 259–268

MAF. (2019). Agricultural Statistics year book 2019. Department of Planning and Finance. Ministry of Agricuture and Forestry. Vientiane. Lao PDR.

Mulatu, G.**,** Haji, J.**,** Legesse, B. & Ketema, M. (2017). Impact of Participation in Vegetables' Contract Farming on Household's Income in the Central Rift Valley of Ethiopia. *American Journal of Rural Development, 5(4): 90-96*

Olounlade, O.A., Cheng Li, G., Haroll Kokoy, S.E., Dossouhoui, F.V., Aristide Akpa, K.A., Anshiso, D. & Biaou, G. (2020). Impact of Participation in Contract Farming on Smallholder Farmers' Income and Food Security in Rural Benin: PSM and LATE Parameter Combined. Journal of *Sustainability.* 901(12): 1-19.

Outhavong, V. (2020). Lao gov't drafts 9th 5-year socio-economic development plan (2021-2025), Department of Planning. Ministry of investment and Planning. Vientiane. Lao PDR.

Phommalailoun, T. (2017). The Impact of INCA-PEAUT to Farmers's Income in Xekong Province. Faculty of Economic and Business Management, University of Laos. Vientiane. Lao PDR.

Rodriguez, D.G., Rejesus, R.M. & Aragon, C.T. (2007). Impacts of an Agricultural Development Program for Poor Coconut Producers in the Philippines: An Approach Using Panel Data and Propensity Score Matching Techniques. Journal of Agricultural and Resource Economics. 32(3): 534-557.

Sisouphanthong, V., Sensouphab, C., Inthakesone, B., Bouyalasy, M. & Sipasert, K. (2012). Econometric1. Faculty of Economic and Business Management, University of Laos. Vientiane. Lao PDR.

Vanvu, H., Ho, H. & Hoi Le, Q. (2020). Impact of Farmers' Associations on Household Income: Evidence from Tea Farms in

Vietnam. Journal of Economics. 92(8): 1-16.

Yamane,T. (1973). Statistics: An Introductory Analysis. (3rd ed.). New York: Harpe

**ຕາຕະລາງທີ 2.1:** ບັນດາຕົວປ່ຽນ ແລະ ຄຳນິຍາມຂອງຕົວປ່ຽນ

| ຕົວປ່ຽນ | ນິຍາມຂອງຕົວປ່ຽນ (Definitions) | ຫົວໜ່ວຍ | ການພົວພັນ | ແຫຼ່ງຕົວປ່ຽນ |
|---|---|---|---|---|
| ຕົວປ່ຽນຕາມ (Dependent Variable) | | | | |
| Ln(Y) | ລາຍໄດ້ຂອງຄົວເຮືອນ | | | |
| ຕົວປ່ຽນອິດສະຫຼະ (Independent Variable) ($X_{ij}$) | | | | |
| Gender | ເພດຂອງຫົວໜ້າຄົວເຮືອນ | 1: ຊາຍ<br>0: ອື່ນໆ | + | Phommalailoun (2017) |
| Educ | ລະດັບການສຶກສາສູງສຸດຂອງຫົວໜ້າຄົວເຮືອນ | ປີ | + | Vanvu et al. (2020) |
| Status | ສະຖານະພາບຂອງຫົວໜ້າຄົວເຮືອນ | 1: ແຕ່ງງານ<br>0: ອື່ນໆ | + | Phommalailoun (2017) |
| HS | ຂະໜາດຂອງຄົວເຮືອນ | ຄົນ | - | Girma & Gardebroek (2015) |
| Land | ເນື້ອທີ່ດິນປູກຝັງຂອງຄົວເຮືອນ | ເຮັກຕາ | + | Olounlad et al. (2020) |
| Exp | ປະສົບການໃນການເຮັດກະສິກຳຂອງຫົວໜ້າຄົວເຮືອນ | ປີ | + | Vanvu et al. (2020) |
| Labor | ຈຳນວນແຮງງານທີ່ໃຊ້ເຂົ້າໃນການຜະລິດຂອງຄົວເຮືອນ | ຄົນ | + | Bodriguez et al. (2007) |
| Owner | ຄວາມເປັນເຈົ້າຂອງທີ່ດິນເຮັດການຜະລິດກະສິກຳຂອງຄົວເຮືອນ | 1: ແມ່ນ<br>0: ບໍ່ແມ່ນ | + | ຜູ້ສຶກສາ |
| Parti | ການເຂົ້າຮ່ວມໂຄງການ ຫຼື ບໍ່ເຂົ້າຮ່ວມໂຄງການຂອງຄົວເຮືອນ | 1: ເຂົ້າຮ່ວມ<br>0: ບໍ່ເຂົ້າຮ່ວມ | + | Vanvu et al. (2020) |
| ໝາຍເຫດ | ເຄື່ອງໝາຍ (+) : ຕົວປ່ຽນອິດສະຫຼະມີການພົວພັນໃນທິດທາງດຽວກັນກັບລາຍໄດ້ | | | |
| | ເຄື່ອງໝາຍ (-) : ຕົວປ່ຽນອິດສະຫຼະມີການພົວພັນໃນທິດທາງກົງກັນຂ້າມກັບລາຍໄດ້ | | | |

**ຕາຕະລາງທີ 3.1:** ດ້ານຂໍ້ມູນທົ່ວໄປ

| ລາຍການ | ຜົນໄດ້ຮັບ/ລາຍການ |
|---|---|
| ເພດຍິງ (%) | 68.37 |
| ອາຍຸ (ປີ) | 52.38 |
| ລະດັບການສຶກສາ (ປີ) | 6.94 |

| | |
|---|---|
| ແຕ່ງງານ (%) | 89.14 |
| ຈໍານວນສະມາຊິກໃນຄົວເຮືອນ (ຄົນ) | 6.02 |
| ເນື້ອທີ່ການຜະລິດ (ເຮັກຕາ) | 4.16 |
| ປະສົບການ (ປີ) | 34.03 |
| ຈໍານວນແຮງງານ (ຄົນ) | 4.07 |
| ຄວາມເປັນເຈົ້າຂອງເນື້ອທີ່ການຜະລິດ (%) | 92.65 |
| ການເຂົ້າຮ່ວມໂຄງການປູກຜັກປອດສານພິດ (%) | 6.07 |
| ລາຍໄດ້ຂອງຄົວເຮືອນ (ກີບ/ປີ) | 20,200,000 |

ແຫຼ່ງຂໍ້ມູນ: ຈາກການສໍາຫຼວດດ້ວຍແບບສອບຖາມ, 25/6-02/07/2020

**ຕາຕະລາງທີ 3.2:** ດ້ານສະພາບການປູກຜັກປອດສານພິດຂອງປະຊາຊົນ

| ລາຍການ | ເນື້ອທີ່ດິນກະສິກໍາ | | ເນື້ອທີ່ດິນປູກຜັກ | | ເນື້ອທີ່ດິນປູກຜັກປອດສານພິດ | |
|---|---|---|---|---|---|---|
| | ຈໍານວນ (ຄົນ) | ສ່ວນຮ້ອຍ (%) | ຈໍານວນ (ຄົນ) | ສ່ວນຮ້ອຍ (%) | ຈໍານວນ (ຄົນ) | ສ່ວນຮ້ອຍ (%) |
| ການໄດ້ຮັບຊົນລະປະທານ | 96 | 30.67 | 15 | 30.61 | 0 | 0 |
| ເນື້ອທີ່ດິນໃຊ້ໄດ້ສອງລະດູການ | 35 | 11.18 | 34 | 53.13 | 19 | 100 |
| ລາຍການ | ຈໍານວນ (ຄົນ) | ຄ່າສະເລ່ຍ | ຈໍານວນ (ຄົນ) | ຄ່າສະເລ່ຍ | ຈໍານວນ (ຄົນ) | ຄ່າສະເລ່ຍ |
| ດ້ານເນື້ອທີ່ການປູກ | 313 | 3.03 | 58 | 1.09 | 19 | 0.41 |
| ດ້ານຜົນໄດ້ຮັບຕໍ່ປີ | 313 | 10,100,000 | 257 | 6,385,574 | 19 | 21,300,000 |

ແຫຼ່ງຂໍ້ມູນ: ຈາກການສໍາຫຼວດດ້ວຍແບບສອບຖາມ, 25/6-02/07/2020

**ຕາຕະລາງທີ 3.3:** ການພົວພັນຕົວປ່ຽນໃນແບບຈໍາລອງຕໍ່ກັບການສ້າງລາຍໄດ້ຂອງປະຊາຊົນ

| ຕົວປ່ຽນອິດສະຫຼະ | Coeficent | Std. Err. | t | Prob |
|---|---|---|---|---|
| ເພດຂອງຫົວໜ້າຄົວເຮືອນ (Gender) | 0.4139*** | 0.1374 | 3.01 | 0.003 |
| ລະດັບການສຶກສາສູງສຸດຂອງຫົວໜ້າຄົວເຮືອນ (Educ) | 0.0286** | 0.0142 | 2.01 | 0.045 |
| ສະຖານະພາບຂອງຫົວໜ້າຄົວເຮືອນ (Status) | 0.2451$^{ns}$ | 0.1584 | 1.55 | 0.123 |
| ຂະໜາດຂອງຄົວເຮືອນ (HS) | 0.0487$^{ns}$ | 0.0320 | 1.52 | 0.129 |
| ເນື້ອທີ່ດິນປູກຝັງຂອງຄົວເຮືອນ (Land) | 0.0243** | 0.0114 | 2.12 | 0.035 |
| ປະສົບການໃນການເຮັດກະສິກໍາຂອງຫົວໜ້າຄົວເຮືອນ (Exp) | 0.0047$^{ns}$ | 0.0043 | 1.1 | 0.274 |
| ຈໍານວນແຮງງານທີ່ໃຊ້ເຂົ້າໃນການຜະລິດຂອງຄົວເຮືອນ (Labor) | 0.0211$^{ns}$ | 0.0343 | 0.61 | 0.539 |
| ຄວາມເປັນເຈົ້າຂອງທີ່ດິນເຮັດການຜະລິດກະສິກໍາຂອງຄົວເຮືອນ (Owner) | 0.4593** | 0.2008 | 2.29 | 0.023 |
| ການເຂົ້າຮ່ວມໂຄງການຂອງຄົວເຮືອນ (Parti) | 0.9240*** | 0.2232 | 4.14 | 0.000 |

| | | | | |
|---|---|---|---|---|
| ຄ່າຄົງທີ່ (cons) | 14.5500*** | 0.3796 | 38.32 | 0.000 |
| n = 313, F( 9, 303) = 6.53, Prob > F = 0.0000, R-squared = 0.1691 | | | | |
| ໝາຍເຫດ: * ມີລະດັບຄວາມສຳຄັນ 0.1; ** ມີລະດັບຄວາມສຳຄັນ 0.05; *** ມີລະດັບຄວາມສຳຄັນ 0.01 ແລະ ns ແມ່ນບໍ່ມີຄວາມສຳຄັນທາງສະຖິຕິ. | | | | |

ແຫຼ່ງຂໍ້ມູນ: ຈາກການສຳຫຼວດດ້ວຍແບບສອບຖາມ, 25/6-02/07/2020